# ສະແຕັມໄປສະນີ ສັນຍາລັກຂອງການໄປສະນີທົ່ວປວງຊົນ

ການໄປສະນີໃນຍຸກເລີ່ມຕົ້ນ ການຮັບຮູ້ຂ່າວສານຂອງຄົນເຮົາແມ່ນໃຊ້ວິທີການຈື່ຈຳ ແລະນຳລາຍງານບອກເລົ່າຕໍ່ໆກັນໄປ ຊຶ່ງສ່ວນໃຫຍ່ແມ່ນເປັນກິດຈະການຂອງກະສັດ ແລະຜູ້ນຳທາງສາສໜາ, ການຈັດທຳລະບົບໄປສະນີດ້ວຍຕົວໜັງສືເກີດຂຶ້ນໃນຍຸກຂອງຈັກກະວັດໂລມັນ ເປັນການໃຊ້ໜັງສືທາງການ ຕິດຕໍ່ກັນລະຫວ່າງລັດຕ່າງໆ ຈຶ່ງມີການຈັດຕັ້ງເຈົ້າໜ້າທີ່ສົ່ງສານ, ເຈົ້າໜ້າທີ່ເບິ່ງແຍງມ້າ, ຈັດທີ່ພັກຜ່ອນໃຫ້ກັບເຈົ້າທີ່ສົ່ງສານ ເອີ້ນສະຖານທີ່ພັກຜ່ອນດັ່ງກ່າວວ່າ **Positus** ມີຄວາມໝາຍວ່າ ຕັ້ງໄວ້ ຈຶ່ງຄາດການຄຳນີ້ ເປັນຮາກສັບຂອງຄຳວ່າ **Post** ຫຼື ການໄປສະນີທີ່ໃຊ້ກັນໃນປະຈຸບັນ. ເມື່ອສັງຄົມຕ້ອງການຕິດຕໍ່ສື່ສານກັນຫຼາຍຂຶ້ນ ການຂ່າວສານບໍ່ໄດ້ເປັນພຽງເລື່ອງສະເພາະຂອງໜ່ວຍງານພາກລັດອີກຕໍ່ໄປ ໃນສັດຕະວັດທີ່ 16 ເກີດການຄ້າຂາຍຂະຫຍາຍຕົວໄປທົ່ວໂລກ ປະຊາຊົນຕ້ອງການໃຊ້ບໍລິການໄປສະນີ ຈຶ່ງມີການຝາກຈົດໝາຍ ແລະສິ່ງຂອງໄປກັບພໍ່ຄ້າທີ່ເດີນທາງໄປຕາມສະຖານທີ່ຕ່າງໆໃນຫຼາຍປະເທດ, ຈົນມາຮອດສັດຕະວັດທີ່ 17 ເກີດການວາງພື້ນຖານການໄປສະນີທີ່ຊັດເຈນຂຶ້ນຈາກການຈັດຕັ້ງລະບົບໄປສະນີທີ່ປະເທດຝຣັ່ງ ມີການຕັ້ງຕູ້ປ່ອນຈົດໝາຍ ແລະມີຄ່າບໍລິການນຳສົ່ງ ເປັນແຜ່ນເຈ້ຍນ້ອຍໆຕິດກັບຈົດໝາຍ ແລະໃນຍຸກຖັດມາຈົດໝາຍ ແລະພັດສະດຸ ກໍ່ໄດ້ຝາກສົ່ງໄປກັບລົດໄຟ ແລະຍານພາຫະນະຕ່າງໆ ຊຶ່ງລັດຖະບານບາງປະເທດເຫັນວ່າມີການເຕີບໂຕຈຶ່ງຮັບຊື້ກິດຈະການໄປສະນີຈາກບໍລິສັດເອກະຊົນມາເປັນກິດຈະການຂອງລັດ ການໄປສະນີກໍຈະເລີນເຕີບໂຕຫຼາຍຂຶ້ນ ແລະມີການນຳເອົາລະບົບໄປສະນີຈາກປະເທດຝຣັ່ງໄປໃຊ້ໃນສະຫະລັດອາເມລິກາ[1] ແລະຂະຫຍາຍຕົວໄປສູ່ປະເທດຕ່າງໆ.

ແນວຄິດເລື່ອງການນຳໃຊ້ສະແຕັມເປັນຄ່າໄປສະນີເລີ່ມຈາກ James Chalmers ຊາວສະກອດແລນ ເມື່ອປີ 1834 ຊຶ່ງຄວາມຄິດດັ່ງກ່າວກໍໄດ້ຮັບການຍອມຮັບຕໍ່ມາ ຈົນມາຮອດປີ 1839 ພາຍໃຕ້ການຊຸກຍູ້ຂອງ Sir Rowland Hill ກໍໄດ້ອອກສະແຕັມດວງທຳອິດຂອງໂລກຄື Penny Black ມີລາຄາໜ້າດວງ 1 ເພນນີ ຊຶ່ງເປັນອັດຕາຄ່າໄປສະນີສຳລັບຈົດໝາຍ ສາມາດສົ່ງໄປໄດ້ປາຍທາງທຸກແຫ່ງ ດ້ວຍລາຄາດຽວກັນ ແລະເລີ່ມມີຜົນບັງຄັບໃຊ້ໃນວັນທີ 6 ພຶດສະພາ 1839 ເນື່ອງຈາກສະຫະລາສະອານາຈັກເປັນປະເທດທຳອິດທີ່ອອກສະແຕັມ ດັ່ງນັ້ນ ສະຫະພາບໄປສະນີສາກົນ (Universal Postal Union-UPU) ຈຶ່ງກຳນົດໃຫ້ສະຫະລາສະອານາຈັກ ເປັນຊາດດຽວ ທີ່ຍົກເວັ້ນບໍ່ຕ້ອງພິມ ຊື່ປະເທດບົນດວງສະແຕັມ ຄືກັບປະເທດອື່ນໆໃນໂລກ.

ສະແຕັມ ຫຼື ກາໄປສະນີກອນ (Postage Stamp ຫຼື Stamp) ເປັນຫຼັກຖານການສຳລະຄ່າບໍລິການໄປສະນີ ມັກເປັນເຈ້ຍຮູບສີ່ລ່ຽມ ພິມອອກເປັນແຜ່ນ ປະກອບດ້ວຍສະແຕັມຫຼາຍດວງ ຢູ່ລະຫວ່າງ 20-120 ດວງ ມີການເຈາະຮູຮອບດວງສະແຕັມ ເພື່ອເພີ່ມຄວາມສະດວກໃນການສີກ ຮອຍສີກທີ່ໄດ້ເອີ້ນວ່າແຂ້ວສະແຕັມ ດ້ານຫຼັງສະແຕັມມີກາວເຄືອບຢູ່ ເຈ້ຍທີ່ໃຊ້ມັກມີສິ່ງພິເສດໄວ້ ເພື່ອປ້ອງກັນການປອມແປງ ເຊັ່ນ ລາຍນ້ຳ ຫຼື ດ້າຍສີ ຫາກຕິດສະແຕັມ ເພື່ອໃຊ້ງານບົນຊອງຈົດໝາຍແລ້ວ ຕ້ອງມີກາປະທັບທຸກຄັ້ງ ເພື່ອປ້ອງກັນການນຳກັບມາໃຊ້ອີກ[2] ຊຶ່ງປະກອບດ້ວຍ ສີ່ ສ່ວນຫຼັກ[3] ດັ່ງນີ້:




1. ຮູບພາບ (Image)
2. ຮູເຈາະຂອບ (Perforations)

---

[1] https://www.thairath.co.th/lifestyle/life/1947026

[2] https://th.wikipedia.org/wiki/แสตมป์

[3] https://en.wikipedia.org/wiki/Postage_stamp

3. ມູນຄ່າຂອງດວງ (Denomination)
4. ຊື່ປະເທດ (Country name)

*ສະແຕັມເປັນສັນຍາລັກທີ່ໃຊ້ແທນການເສຍຄ່າໄປສະນີ ທີ່ສາມາດອອກ ຫຼື ຈັດພິມ ໂດຍຜູ້ໃຫ້ບໍລິການ ແລະ ອົງການຄຸ້ມຄອງໄປສະນີ ຫຼື ຜູ້ຂາຍທີ່ໄດ້ຮັບອະນຸຍາດອື່ນໆ ໃຫ້ກັບລູກຄ້າທີ່ສຳລະຄ່າໄປສະນີ* (ຄ່າໃຊ້ຈ່າຍກ່ຽວກັບການຂົນສົ່ງ ປະກັນ ຫຼື ລົງທະບຽນໄປສະນີ) ຈາກນັ້ນປະທັບຕາໄວ້ທີ່ດ້ານໜ້າ ຫຼື ທີ່ຢູ່ຂອງສິ່ງຂອງທາງໄປສະນີ ເຊັ່ນ ຊອງຈົດໝາຍ ຫຼື ຊອງໄປສະນີອື່ນໆ (ຊອງ, ກ່ອງ, ກະບອກສົ່ງໄປສະນີ) ທີ່ຕ້ອງການສົ່ງ ຈາກນັ້ນລະບົບໄປສະນີຈຶ່ງມີການປະທັບຕາໄປສະນີພັນ ຫຼື ເຄື່ອງໝາຍຍົກເລີກ (ວັນທີ ແລະແຫຼ່ງທີ່ມາຂອງການສົ່ງ) ບົນສະແຕັມ ແລະດ້ານຊ້າຍ ແລະຂວາ ເພື່ອປ້ອງກັນການໃຊ້ຊ້ຳ ຈາກນັ້ນຈຶ່ງສົ່ງໄປໃຫ້ຜູ້ຮັບ. ພາບທີ່ນຳມາໃຊ້ໃນດວງສະແຕັມມັກຈະເປັນເຫດການທີ່ເກີດຂຶ້ນໃນສັງຄົມ ໃນຊ່ວງເວລາທີ່ອອກດວງສະແຕັມນັ້ນ ດັ່ງນັ້ນ ສະແຕັມຈຶ່ງມີຄວາມສຳຄັນທາງປະຫວັດສາດ ແລະສະແດງໃຫ້ເຫັນເຖິງການຂະຫຍາຍຕົວຂອງການໄປສະນີນັ້ນເອງ.

ສະເພາະປະເທດລາວໄດ້ນຳໃຊ້ສະແຕມຂອງອິນໂດຈີນຝຣັ່ງເສດມາຈົນຮອດທ້າຍປີ 1951 ຈາກນັ້ນລາສອະອານາຈັກລາວຈຶ່ງໄດ້ອອກສະແຕັມຊຸດທຳອິດເປັນຂອງຕົນເອງ ເມື່ອວັນທີ 13 ພະຈິກ 1951 (kingdom of Laos)[4] ຊຶ່ງເປັນຊ່ວງທີ່ລາວໄດ້ປະກາດເອກະລາດຈາກຝຣັ່ງ ແລະສະຫຍາມ.




ຮູບສະແຕັມຂອງລາວທີ່ຜະລິດອອກຊຸດທຳອິດໃນປີ 1951

**ສະແຕັມ (Postage stamp)** ສາມາດຈຳແນກໄດ້ຫຼາຍແບບ ໂດຍທົ່ວໄປນິຍົມແບ່ງອອກເປັນ 3 ປະເພດ ເຊັ່ນ **ສະແຕັມທົ່ວໄປ**, **ສະແຕັມທີ່ລະນຶກ** ແລະ **ສະແຕັມພິເສດ** ດັ່ງລຸ່ມນີ້:

**ສະແຕັມທົ່ວໄປ:** ເປັນສະແຕັມທີ່ພິມອອກມາ ເພື່ອນຳໃຊ້ເຂົ້າໃນວຽກງານໄປສະນີເປັນຫຼັກ ເອີ້ນວ່າ definitive stamp ຊຶ່ງເປັນສະແຕັມໄປສະນີປະເພດທຳອິດທີ່ຈັດພິມຂຶ້ນ ເນື່ອງຈາກຄ່າໄປສະນີມີຫຼາຍອັດຕາຂຶ້ນກັບນ້ຳໜັກ ຄວາມດ່ວນຂອງການສົ່ງ ການຮັບປະກັນການສູນເສຍ ເປັນຕົ້ນ ສະແຕັມທົ່ວໄປມັກພິມຫຼາຍລາຄາ ໂດຍແຕ່ລະລາຄາມີຮູບແບບຄືກັນ ມີຈຳນວນທີ່ພິມຫຼາຍ ແລະອາດມີການພິມເພີ່ມຫຼາຍຄັ້ງ.

ຮູບພາບທີ່ນິຍົມໃຊ້ບົນສະແຕັມທົ່ວໄປ ແມ່ນ ຮູບພາບຜູ້ນຳປະເທດ ຮູບພາບລັກສະນະ ແລະສັນຍາລັກຂອງປະເທດ ເຊັ່ນ ດອກໄມ້ ສັດ ສິ່ງກໍ່ສ້າງ ດັ່ງນີ້ເປັນຕົ້ນ ຊຶ່ງສະແຕັມດວງທຳອິດຂອງໂລກຄືຮູບສົມເດັດພະລາຊິນີ ວິກຕໍເລຍ ສຳຫຼັບປະເທດລາວ ມັກນິຍົມເອົາຮູບ ລັກສະນະສະເພາະຂອງປະເທດພິມລົງບົນດວງສະແຕັມທົ່ວໄປ ເຊັ່ນ ວັດ, ຮູບສັດ, ເຄື່ອງຫັດຖະກຳ ແລະອື່ນໆ.

[4] Postage stamps and postal history of Laos - Wikipedia




ຮູບສະແຕັມລາວທີ່ມີເອກະລັກ ແລະສີສັນສະເພາະຄວາມເປັນລາວ

**ສະແຕັມທີ່ລະນຶກ:** ສະແຕັມທີ່ລະນຶກ ເປັນສະແຕັມທີ່ຈັດພິມຂຶ້ນເນື່ອງໃນໂອກາດທົ່ວໄປ ແລະພິມຂຶ້ນເປັນຈຳນວນຈຳກັດ ເອີ້ນວ່າ Commemorative Stamp ສະແຕັມປະເພດນີ້ເມື່ອພິມຈຳໜ່າຍໝົດແລ້ວກໍຈະບໍ່ມີການຈັດພິມເພີ່ມ ມີຫຼາຍລັກສະນະ ເຊັ່ນ:

- ເປັນທີ່ລະນຶກເນື່ອງໃນໂອກາດຄົບຮອບເຫດການທີ່ສຳຄັນ ຫຼື ວັນຄົບຮອບຂອງບຸກຄົນສຳຄັນ.
- ເປັນທີ່ລະນຶກເນື່ອງໃນກິດຈະກຳພິເສດ ເຊັ່ນ ງານກາແດງ, ງານແຂ່ງຂັນກິລາ, ງານແລກປ່ຽນທີ່ສຳຄັນຂອງຊາດ ເຊັ່ນ ກອງປະຊຸມ, ວັນປີໃໝ່ ແລະອື່ນໆ.
- ເປັນທີ່ລະນຶກສຳຫຼັບເຜີຍແຜ່ເລື່ອງຕ່າງໆ ເປັນຕົ້ນ ກ່ຽວກັບທຳມະຊາດ, ງານສິນລະປະ, ການຮັກສາສະພາບແວດລ້ອມ, ວັດທະນະທຳ ດັ່ງນີ້ເປັນຕົ້ນ. ສະແຕັມປະເພດນີ້ອາດເອີ້ນວ່າ ສະແຕັມພິເສດ (Special stamp) ເກີດຂຶ້ນມາພາຍຫຼັງ ເມື່ອຄວາມນິຍົມການສະສົມສະແຕັມເພີ່ມຫຼາຍຂຶ້ນ.















ຮູບສະແຕັມທີ່ລະນຶກ

**ສະແຕັມພິເສດອາດຈັດແບ່ງອອກເປັນຫຼາຍລັກສະນະ ດັ່ງນີ້:**

**ສະແຕັມນຳໃຊ້ສະເພາະກໍລະນີ:** ສະແຕັມທົ່ວໄປບາງດວງທີ່ຈັດພິມຂຶ້ນ ເພື່ອນຳໃຊ້ສະເພາະດ້ານ ຕົວຢ່າງ ສະແຕັມສຳລັບອາກາດໄປສະນີ (Airmail), ສະແຕັມສຳຫຼັບອົງກອນທີ່ສົ່ງຈົດໝາຍຈຳນວນຫຼາຍ (Bulk Mail) ຊຶ່ງມີລາຄາບົນດວງສະແຕັມກົງກັບອັດຕາຄ່າສົ່ງແບບພິເສດນັ້ນໆ ອີກຕົວຢ່າງໜຶ່ງຄືສະແຕັມທີ່ພິມ ເພື່ອ*ນຳໃຊ້ໂດຍໜ່ວຍງານຂອງລັດ (Official stamp) ຊຶ່ງການອອກສະແຕັມແບບນີ້ເອີ້ນວ່າສະແຕັມທົດສອບສະຖິຕິທາງການ ພິມອອກມານຳໃຊ້ຊ່ວງເວລາສັ້ນໆ ເພື່ອເກັບກຳສະຖິຕິການສົ່ງໄປສະນີຂອງໜ່ວຍງານແຕ່ລະແຫ່ງຂອງລັດຖະບານ.*




ຮູບສະແຕັມທີ່ໃຊ້ສະເພາະກໍລະນີ

**ສະແຕັມແບບອື່ນທີ່ມີຊື່ເອີ້ນສະເພາະ:** ສະແຕັມຕ່າງໆຕໍ່ໄປນີ້ ບໍ່ໄດ້ແຍກປະເພດຕ່າງຫາກຈາກສະແຕັມທົ່ວໄປ ແລະສະແຕັມທີ່ລະນຶກທີ່ກ່າວໄວ້ຂ້າງເທິງ ແຕ່ມີລັກສະນະພິເສດສະເພາະຕົວ ແລະມີຊື່ເອີ້ນສະເພາະ ດັ່ງລຸ່ມນີ້:

- **ສະແຕັມພິມແກ້:** ສະແຕັມຕ່າງໆທີ່ນຳອອກຈຳໜ່າຍ ແລະນຳໃຊ້ທາງໄປສະນີບໍ່ຈຳເປັນຕ້ອງເປັນສະແຕັມທີ່ພິມຂຶ້ນໃໝ່ສະເໝີ ແຕ່ອາດເປັນສະແຕັມພິມແກ້ (OverPrint) ຄືສະແຕັມຂອງເດີມທີ່ມີຢູ່ແລ້ວ ແຕ່ນຳມາພິມເພີ່ມບາງຢ່າງລົງໄປບົນສະແຕັມ ສະແຕັມພິມແກ້ມີທັງສະແຕັມທົ່ວໄປ ແລະ ສະແຕັມທີ່ລະນຶກ ຕົວຢ່າງ ດັ່ງຮູບລຸ່ມນີ້




ຮູບສະແຕັມດັດແກ້ໄປນຳໃຊ້ກັບປະເທດໃນອານານິຄົມ ແຕ່ຊ້າຍຫາຂວາ ຊີລີ, ອາເຊລີ, ລາວ ແລະໄທ

ສະແຕັມພິມແກ້ທີ່ໃຊ້ເປັນສະແຕັມທົ່ວໄປ ອາດມີຈຸດປະສົງໃນການຈັດພິມຕ່າງໆ ທີ່ແຕກຕ່າງກັນ ນຳສະແຕັມຂອງປະເທດໜຶ່ງພິມຂໍ້ຄວາມ ເພື່ອນຳໄປໃຊ້ໃນດິນແດນອານານິຄົມ ແລະນຳສະແຕັມລາຄາໜຶ່ງມາແກ້ໄຂເປັນອີກລາຄາໜຶ່ງ ເອີ້ນວ່າ ພິມແກ້ລາຄາ (Surchage) ໃຊ້ກໍລະນີທີ່ໄປສະນີຂາດແຄນສະແຕັມບາງລາຄາ ຫຼືມີການປັບປ່ຽນໜ່ວຍເງິນຕາ ແລະໃຊ້ງານລະຫວ່າງທີ່ລໍສະແຕັມລາຄາທີ່ຂາດແຄນພິມສຳເລັດ ສະແຕັມພິມແກ້ພົບຫຼາຍໃນສະແຕັມຊຸດທຳອິດ ເນື່ອງຈາກການພິມ ແລະການຂົນສົ່ງໃຊ້ເວລາດົນ




ຮູບສະແຕັມທີ່ດັດແກ້ມູນຄ່າໃໝ່

- **ສະແຕັມສ່ວນຕົວ:** ສະແຕັມສ່ວນຕົວ (Personalized stamp) ຄືສະແຕັມທີ່ດ້ານຂ້າງມີພາບອື່ນຊຶ່ງຜູ້ທີ່ຊື້ສະແຕັມສາມາດນຳມາໃສ່ໄດ້ ເຊັ່ນ ພາບຖ່າຍ ຊຶ່ງຕາມສະຖານທີ່ສະແດງຕ່າງໆ ທີ່ໄປສະນີເປີດໃຫ້ບໍລິການໃນຊ່ວງຫລັງໆມັກມີບໍລິການຖ່າຍຮູບເພື່ອພິມສະແຕັມສ່ວນຕົວອີກດ້ວຍ ສະແຕັມດັ່ງກ່າວສາມາດໃຊ້ໄດ້ຈິງທາງໄປສະນີໄດ້ ແຕ່ຕ້ອງຕິດສ່ວນທີ່ເປັນພາບຖ່າຍ ແລະສະແຕັມໄປຄູ່ກັນ.




ຮູບສະແຕັມສ່ວນບຸກຄົນ

- **ສະແຕັມຕະລົກ**: ເປັນສະແຕັມທີ່ມີຄວາມຜິດປົກກະຕິລະຫວ່າງການພິມ ເອີ້ນວ່າ Error ຫລື Variety ທີ່ອາດເກີດຂຶ້ນດ້ວຍຄວາມບັງເອີນພຽງບາງແຜ່ນ ເຊັ່ນ ໝຶກເປື້ອນ, ຮູເຈາະເຄື່ອນ, ພິມຊ້ຳ ຫຼື ເກີດຈາກຮອຍຕຳນິບົນແມ່ພິມ ຊຶ່ງມີຜົນເຮັດໃຫ້ສະແຕັມຕິງຕຳແໜ່ງດັ່ງກ່າວຂອງທຸກແຜ່ນມີຄວາມຜິດພາດທັງໝົດ ສະແຕັມຕະລົກສາມາດນຳໃຊ້ໄດ້ຈິງທາງໄປສະນີ ແລະເປັນທີ່ນິຍົມສະສົມໂດຍສະແຕັມຕະລົກບາງດວງມີຄ່າຫຼາຍກວ່າສະແຕັມຈິງ ເພາະມີປະລິມານໜ້ອຍ.




ຮູບສະແຕັມທີ່ເກີດຄວາມຜິດພາດໃນການພິມ

ເລື່ອງລາວຂອງກາໄປສະນີກອນ ຫຼື ສະແຕັມໄປສະນີເປັນສິ່ງທີ່ໜ້າສົນໃຈຫຼາຍ ຊຶ່ງຕິດພັນກັບການພັດທະນາດ້ານການສື່ສານ ການຄ້າ ແລະການປົກຄອງ ບໍ່ພຽງແຕ່ໃຊ້ແທນການຊໍາລະຄ່າໄປສະນີເທົ່ານັ້ນ ແຕ່ເມື່ອເວລາຜ່ານໄປ ສະແຕັມກໍໄດ້ມີການພັດທະນາເປັນຜົນງານດ້ານສິນລະປະທີ່ມີຄວາມງົດງາມ ທີ່ສະທ້ອນໃຫ້ເຫັນເຖິງມູນມໍລະດົກຂອງປະເທດ, ບຸກຄົນສໍາຄັນ ເຫດການທາງປະຫວັດສາດ ພືດ ສັດ ແລະອື່ນໆ.

ອີງປະກອບທາງດ້ານສິນລະປະ ສະແຕັມມັກມີການອອກແບບທີ່ສະລັບສັບຊ້ອນ ຕັ້ງແຕ່ຮູບພາບສະເໝືອນຂອງຜູ້ນໍາປະເທດ ໄປຈົນເຖິງການສະແດງສັນຍາລັກທີ່ສໍາຄັນ ດ້ວຍການເກັບເປັນທີ່ລະນຶກ ຊຶ່ງປະເດັນພິເສດທີ່ນໍາໃຊ້ເປັນທີ່ລະນຶກ ຄືການຈາລຶກເຖິງເຫດການທີ່ສໍາຄັນ ວັນຄົບຮອບ ຫຼື ລະນຶກເຖິງບຸກຄົນທີ່ສໍາຄັນ ຊຶ່ງມີມູນຄ່າແລະຄວາມສໍາຄັນສໍາລັບນັກສະສົມ ທີ່ກາຍມາເປັນມູນຄ່າທາງປະຫວັດສາດ ແລະມູນຄ່າທາງການເງິນໄດ້ສູງ ຊຶ່ງວິວັດທະນາການທາງເຕັກໂນໂລຊີ ແລະຄວາມກ້າວໜ້າທີ່ທັນສະໄໝໄດ້ນໍາໄປສູ່ນະວັດຕະກໍາຕ່າງໆໃນການຜະລິດແລະການໃຊ້ສະແຕັມໃຫ້ມີຄວາມເໝາະສົມກັບຍຸກສະໄໝຫຼາຍຂຶ້ນ ແລ້ວຫັນໄປສູ່ສະແຕັມດີຊີຕອນ[5] ທີ່ສະແດງໃຫ້ເຫັນເຖິງການປ່ຽນແປງທາງພຶດຕະກໍາຂອງສັງຄົມດ້ານເຕັກໂນໂລຊີ ແລະການສື່ສານຂອງສະແຕັມໄປສະນີ ເຮັດໃຫ້ເກີດການສຶກສາຮຽນຮູ້ ແລະການສະສົມສະແຕັມມີການເຕີບໂຕ ແລະຂະຫຍາຍຕົວໄປທົ່ວໂລກ. ນັກສະສົມສະແຕັມ ເປັນບຸກຄົນທີ່ມີຄວາມຊ່ຽວຊານເປັນພິເສດໃນງານດ້ານການສະສົມສະແຕັມ, ກອບ ແລະໄລຍະປະຫວັດສາດຂອງປະເທດ ໄດ້ດີທີ່ສຸດ.




ຮູບສະແຕັມດີຊີຕອນ

ສ່ວນບັນດາຂໍ້ມູນສໍາຫລັບການສຶກສາວິໄຈໂດຍລະອຽດ ແລະຜົນກະທົບທາງດ້ານວັດທະນະທໍາສະແຕັມ ສາມາດເບິ່ງແຫຼ່ງຂໍ້ມູນ ແລະສິ່ງພິມທີ່ມີຢູ່ໃນພິພິດຕະພັນໄປສະນີ ແລະສະມາຄົມຕາໄປສະນີກອນ ຕາມຊື່ນີ້ Royal Philatelic Society of London ແລະ Smithsonian National Postal Museum

[5] http://www.jgiesen.de/briefmarken/institutionen30.html




ຮູບ Royal Philatelic Society of London




ຮູບ Smithsonian National Postal Museum